# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ 22 ສິງຫາ 2010 (22-8-2010)

---

### ເວົ້າເຖິງຄວາມບາບສ່ວນຕົວ

**ຂໍ້ພຣະຄັມພີໃນບົດຮຽນນີ້:** 2 ຊາມູເອນ 11:2-5ມ 14-15; 12:7ກ, 10-14; ເພງສັຣເສີນ 51:1-4

**ຄໍາຖາມຊີວິດ:** ບົດຮຽນນີ້ຈະຊ່ອຍໜູນໃຈທ່ານໃຫ້ຮູ້ເຖິງຄວາມຍິນດີຂອງພຣະເຈົ້າ ທີ່ຈະໃຫ້ອະພັຍຄວາມຜິດບາບ ແລະສອນໃຫ້ທ່ານຮ້ອງຂໍຕໍ່ພຣະອົງເຖິງຄວາມຜິດສ່ວນຕົວໃນຊີວິດຂອງທ່ານ.

**ພຣະຄັມພີແຫ່ງຄວາມຈິງ:** ບົດຮຽນນີ້ເວົ້າເຣື່ອງພຣະເຈົ້າຖືວ່າພວກເຮົາມີຄວາມຮັບຜິດຊອບຕໍ່ຄວາມຜິດບາບຂອງພວກເຮົາ ແລະບອກເຖິງວິທີຄວນຈະເຮັດຢ່າງໃດຕໍ່ຄວາມຜິດບາບ ແລະຄວາມພາດພັ້ງສ່ວນຕົວ.

**ຜົນສະທ້ອນຕໍ່ຊີວິດ:** ເຖິງແມ່ນຄຣິສະຕຽນທີ່ດີກໍຍັງຕົກເຂົ້າໄປສູ່ການທົດລອງ. ມັນບໍ່ສໍາຄັນເທົ່າໃດທີ່ວ່າເຮົາຈະຕົກເຂົ້າໄປ ແຕ່ສໍາຄັນຢູ່ທີ່ວ່າເມື່ອໃດເຮົາໄດ້ຕົກເຂົ້າໄປໃນຄວາມບາບແລ້ວ. ໃນເມື່ອເຮົາໄດ້ຕົກເຂົ້າໄປພວກເຮົາມັກເຊື່ອງມັນໄວ້ຫລືຖິ້ມໂທດໃສ່ຄົນອື່ນເວລາຖືກຈັບໄດ້. ທາງທີ່ດີທີ່ສຸດຄືໃຫ້ເຮົາຍອມຮັບໃນເມື່ອຕົກຢູ່ໃນຄວາມບາບຄື ສາລະພາບ ແລະຖິ້ມໃຈເກົ່າແລະເອົາໃຈໃໝ່.

ມີຫົວໜ້າພະແນກນໍາເພງໃນຄຣິສຕະຈັກໄດ້ຊັກຊວນໃຫ້ສະມາຊິກໃນກຸ່ມຮ້ອງເພງກໍ່ສ້າງທຸຣະກິດໂດຍສັນຍາວ່າພວກເຂົາຈະໄດ້ກໍາໄລຢ່າງຫລວງຫລາຍ. ໃນເມື່ອທຸຣະກິດນັ້ນບໍ່ໄດ້ຜົນຕາມຄວາມເວົ້າ ຫົວໜ້າພະແນກນໍາເພງນັ້ນເສັຽໃຈໂດຍບໍ່ກ້າພົບກັບສະມາຊິກ ເລີຍຂ້າຕົນເອງຕາຍ. ມີຄົນຮັບໃຊ້ອີກຄົນນຶ່ງໄດ້ຍອມສາລະພາບວ່າຕົນເອງມີບັນຫາໃນການພະນັນ. ລາວຍອມຮັບເຖິງຄວາມຜິດບາບຂອງຕົນເອງ ແລະຊອກຫາຄໍາແນະນໍາຈາກຄົນອື່ນ ແລະຂໍລາພັກເພື່ອສແວງຫາທາງແກ້ບັນຫາເຫລົ່ານັ້ນ. ລາວໄດ້ປະເຊີນກັບບັນຫາກ່ຽວກັບຄວາມບາບສ່ວນຕົນ ແລະກໍເຫັນວ່າຜູ້ຮັບໃຊ້ທັງສອງຄົນນີ້ໄດ້ຮັບຜົນແຕກຕ່າງກັນ.

ຫລາຍເທື່ອໃນເມື່ອຕົກໃນຄວາມບາບແລ້ວ ມະນຸດເຮົາມັກເຊື່ອງຄວາມບາບນັ້ນ, ແລ່ນໜີຈາກບັນຫາ ຫລືຈະປະເຊີນກັບຄວາມຜິດບາບນັ້ນເພື່ອສແວງຫາພຣະຜູ້ເປັນເຈົ້າເພື່ອຈະໄດ້ຮັບການໃຫ້ອະພັຍ. ກະສັດດາວິດໄດ້ເຮັດຄວາມຜິດບາບຢ່າງໃຫຍ່ຫລວງທີ່ສຸດຄື: ເຮັດຄວາມບາບໃນຖານຫລິ້ນຊູ້ ແລະກາຍເປັນຄົນຂ້າຄົນ. ທໍາອິດເພິ່ນພະຍາຍາມເຊື່ອງຄວາມຜິດບາບນັ້ນໄວ້ ແລະພຣະເຈົ້າໄດ້ບອກເພິ່ນເຖິງຄວາມຜິດແລະໃນທີ່ສຸດເພິ່ນກໍຮັບເອົາຄວາມຜິດນັ້ນເພື່ອແກ້ໄຂບັນຫາໃນທາງສ່ວນຕົວ.

## 1. <u>ຮູ້ເຖິງການທົດລອງວ່າມັນນໍາໄປສູ່ຄວາມຜິດບາບ</u> (2 ຊາມູເອນ 11:2-5. 14-15)

| |
|---|
| ກະສັດດາວິດໄດ້ເຮັດສິ່ງທີ່ຍິ່ງໃຫຍ່ຕໍ່ອົງພຣະຜູ້ເປັນເຈົ້າ. ເພິ່ນເປັນຄົນຂອງພຣະເຈົ້າຜູ້ມີຊື່ສຽງດີ, ແຕ່ເຫັນວ່າການທົດລອງນັ້ນບໍ່ເຫັນແກ່ໜ້າໃຜ ມັນໄດ້ເຂົ້າມາໃນຊີວິດຂອງແຕ່ລະຄົນໃນເມື່ອມັນມີໂອກາດ. |

ຄືນວັນນຶ່ງດາວິດໄດ້ຍ່າງຫລິ້ນຢູ່ເທິງດາດຟ້າໃນວັງຂອງຕົນເອງ. ເວລານັ້ນເພິ່ນໄດ້ຍ່າງກັບໄປມາຢູ່ ເພິ່ນໄດ້ພົບເຫັນຜູ້ຍິງທີມີຮູບຮ່າງ**ງາມທີ່ສຸດຄົນນຶ່ງກຳລັງອາບນໍ້າຢູ່** ໃນຫລັງຄາເຮືອນເວລານັ້ນບໍ່ມີນໍ້າປະປາ ນາງຈຶ່ງອອກໄປຂ້າງນອກເພື່ອອາບນໍ້າ**ຫລັງຈາກເປັນປະຈຳເດືອນ.**

ການທົດລອງໄດ້ເລີ້ມຕົ້ນດ້ວຍການເບິ່ງຜູ້ຍິງງາມຄົນນຶ່ງເທົ່ານັ້ນ ຕໍ່ມາດາວິດໄດ້ວາງແຜນເອົານາງນັ້ນມາເພື່ອຕົນເອງຈະມີຄວາມສຸກໃນທາງເພດສຳພັນ. ເພິ່ນໄດ້ພົບຂໍ້ຫ້າມຫລາຍໆຢ່າງທີ່ບອກວ່າເອົາເມັຽຂອງຄົນອື່ນມາເປັນຂອງຕົນແມ່ນມີຄວາມຜິດບາບ ແຕ່ເພິ່ນໄດ້ມອງຂ້າມຄຳເຕືອນນັ້ນ. ນາງ ບັດເຊບາເປັນລູກຂອງອີລຽມແລະເປັນເມັຽຂອງອູຣີອາ. ອີລຽມແມ່ນຄົນນຶ່ງທີ່ດາວິດໄວ້ວາງໃຈໄດ້ ແລະອູຣີອາເປັນນັກຮົບເພື່ອດາວິດເໝືອນກັນ ແລະດາວິດຍັງຮູ້ຈັກພໍ່ເຖົ້າຂອງບັດເຊບາຜູ້ຊື່ວ່າ ອາຫິໂຕແປວ ເປັນຄົນໃຫ້ຄຳປຶກສາຜູ້ສຳຄັນອີກ. ດາວິດເປັນຄົນເຫັນແກ່ຕົວແລະຍອມຕໍ່ການທົດລອງນັ້ນຢ່າງສິ້ນເຊີງ ເພາະຮູ້ແລ້ວວ່າຖ້າເຮັດໄປກໍເປັນທຳລາຍຄົນສຳຄັນສາມຄົນໃນຊີວິດ. ໃຫ້ພວກເຮົາຮຽນຮູ້ເຖິດວ່າ ເວລາມີການທົດລອງເຂົ້າມາໃນຊີວິດໃຫ້ພວກເຮົາມອງເຫັນຄຳເຕືອນທີ່ບອກວ່າ ຢ່າເປີດປະຕູໃຫ້ມັນຢ່າງເດັດຂາດ. ຈົ່ງປະຕິເສດ, ຢ່າຫລຽວເບິ່ງເປັນເດັດຂາດ.

**ໂທດຂອງການຫລິ້ນຊູ້**

ພຣະເຈົ້າໄດ້ປະທານພຣະບັນຍັດສິບປະການໃຫ້ໂມເຊເພື່ອເປັນການສິດສອນແລະແນະນຳປະຊາກອນຂອງພຣະອົງໃນຄຳສອນນັ້ນກໍມີຂໍ້ຫ້າມບໍ່ໃຫ້ຫລິ້ນຊູ້ (ອົບພະຍົບ 20:14). ຄວາມສັດຊື່ຕໍ່ກັນເວລາແຕ່ງງານເປັນສິ່ງສຳຄັນໃນສັງຄົມ. ຖ້າວ່າການແຕ່ງງານຕົກແຕກໄປກໍເປັນຜົນສະທ້ອນໄປເຖິງສັງຄົມເຊັ່ນກັນເພາະວ່າການແຕ່ງງານ ແລະຄວາມສັດຊື່ຕໍ່ກັນນັ້ນສຳຄັນຫລາຍ ຖ້າວ່າມີຄົນໃດບໍ່ສັດຊື່ກໍມີໂທດໜັກ. ອີງຕາພຣະຄັມພີແລ້ວຕ້ອງໄດ້ຮັບໂທດເຖິງຕາຍ (ລະບຽບພວກເລວີ 20:10; ພຣະບັນຍັດທີສອງ 22:22 ).

## 2. <u>ໃຫ້ຮູ້ວ່າຄວາມບາບນັ້ນປະໄວ້ບໍ່ໄດ້:</u> (2 ຊາມູເອນ 7ກ, 10-12)

ຄວາມບາບນັ້ນບໍ່ມີໃຜເຊື່ອງມັນໄດ້ນານ. ພຣະເຈົ້າຮູ້ຈັກດີ ແລະພວກເຮົາຈຳເປັນຕ້ອງປະເຊີນກັບມັນວັນໃດວັນນຶ່ງ. ຜູ້ປະກາດພຣະທັມນາທານໄດ້ຖືກສົ່ງມາເພື່ອປະເຊີນກັບຄວາມຜິດຂອງກະສັດດາວິດ ເພິ່ນໄດ້ເລົ່າເຣື່ອງຂອງສອງຄົນຜູ້ນຶ່ງຄົນລວຍແລະອີກຜູ້ນຶ່ງເປັນຄົນຍາກຈົນ. ຄົນຮັ່ງນັ້ນມີແກະແລະສັດອື່ນຢ່າງຫລວງຫລາຍ ສ່ວນຄົນທຸກຍາກນັ້ນມີແກະນ້ອຍອ່ອນຕົວດຽວທີ່ລາວຮັກຫລາຍເໝືອນສັດລ້ຽງໃນບ້ານ ແກະນ້ອຍໂຕນີ້ກິນແລະນອນນຳເຈົ້າຂອງ. ເວລາມີແຂກມາຢາມຄົນຮັ່ງນັ້ນເລີຍເອົາແກະນ້ອຍຂອງຄົນຈົນມາຂ້າລ້ຽງແຂກ ແທນທີ່ຈະຂ້າສັດທີ່ຕົນເອງທີ່ມີຫລາຍຢູ່ແລ້ວ. ໃນເມື່ອກະສັດດາວິດໄດ້ຍິນເຣື່ອງດັ່ງກ່າວນີ້ກໍເຮັດໃຫ້ເພິ່ນໂກດຮ້າຍຫລາຍເພິ່ນຈຶ່ງສັ່ງໃຫ້ເອົາຄົນທີ່ເຮັດດັ່ງນັ້ນໄປປະຫານຊີວິດເພາະຄວາມຜິດບາບອັນຊົ່ວ. ໃນທີ່ສຸດຜູ້ປະກາດພຣະທັມນາທານໄດ້ເວົ້າວ່າຄົນທີ່ເຮັດດັ່ງນັ້ນແມ່ນ **"ພຣະອົງນັ້ນແຫລະເປັນຊາຍຄົນນັ້ນ."** ພວກເຮົາທຸກໆຄົນຕ້ອງການຜູ້ປະກາດພຣະທັມດັ່ງກວ່າໃນຊີວິດຜູ້ບໍ່ຢ້ານທີ່ຈະປະເຊີນກັບເພື່ອນຜູ້ເຮັດຄວາມຜິດ.

ພຣະເຈົ້າໄດ້ປະກາດວ່າຄວາມຕາຍໄດ້ເຂົ້າມາໃນບ້ານເຮືອນຂອງກະສັດດາວິດ. **ດາບ**ຂອງຄວາມວຸ້ນວາຍໄດ້ທຳລາຍດາວິດແລະລູກເຕົ້າທັງຫລາຍຜູ້ນັ່ງບັນລັງໃນເວລາຕໍ່ມາ. ລູກຊາຍສີ່ຄົນໄດ້ຕາຍຕອນທີ່ຍັງເປັນຊາຍໜຸ່ມ. ລູກຂອງດາວິດອີກຄົນນຶ່ງໄດ້ເປັນກະບົດຢາກຂ້າພໍ່ແລະຍາດເອົາບັງລັງ.

ເຣື່ອງເຫດຮ້າຍໄດ້ເກີດຂຶ້ນເພາະດາວິດໄດ້ເຮັດແນວພຣະເຈົ້າກຽດຊັງໂດຍເອົາເມັຽຂອງອູຣີອາ. ດາວິດບໍ່ໄດ້ເຊື່ອຟັງຄຳສອນໃນພຣະບັດຍັດສິບປະການ ແຕ່ເປັນການກຽດຊັງອົງພຣະຜູ້ເປັນເຈົ້າເພາະຍ້ອນຍອມແພ້ຕໍ່ການທົດລອງທີ່ເຮັດໃຫ້ພຣະເຈົ້າຜູ້ຕົນຮັບໃຊ້ໄດ້ຮັບຄວາມອັບອາຍ. ດັ່ງນັ້ນ, ເຫດຮ້າຍນາໆປະການຈຶ່ງໄດ້ເກີດຂຶ້ນກັບຊີວິດຂອງເພິ່ນ. ຄວາມຜິດບາບນີ້ເພິ່ນໄດ້ເຮັດໃນທີ່ລັບລີ້ ແຕ່ປະຊາຊົນອິສຣາເອນທຸກຄົນຮູ້ຈັກເຖິງຄວາມບາບນັ້ນ.

ຂ້າພະເຈົ້າຈື່ຄຳຂອງແມ່ເຖົ້າກ່າວເວລາຂ້າພະເຈົ້າໄປໃນງານບຸນຕ່າງໆວ່າ ຄວາມບາບຈະຕິດຕາມໄປທັນເນີ (ຈົດບັນຊີ 32:23). ຖ້າແມ່ເຖົ້າຂອງຂ້າພະເຈົ້າຍັງມີຊີວິດຢູ່ ຂ້າພະເຈົ້າຈະກ່າວຂອບໃຈນຳຄຳເຕືອນອັນນັ້ນ. ມັນເປັນຂໍ້ເຕືອນກ່ອນຈະພົບກັບການທົດລອງ ແລະຊ່ວຍຂ້າພະເຈົ້າບໍ່ໃຫ້ເຮັດຄວາມບາບ.

## 3. <u>ຍິນດີເຫັ້ນເພາະໄດ້ຮັບການໃຫ້ອະພັຍໂທດບາບແລ້ວ</u> ( 2 ຊາມູເອນ 12:13-13; ເພງສັຣເສີນ 51:1-4)

ກະສັດດາວິດຄວນເຮັດຢ່າງໃດທີ່ຜູ້ປະກາດພຣະທັມນາທານໄດ້ກ່າວນັ້ນ? ດາວິດປາກບໍ່ອອກເພາະເພິ່ນໄດ້ຮູ້ເຖິງຄວາມຜິດນັ້ນຄືເພິ່ນໄດ້ຕົກເປັນເຍື່ອຂອງການທົດລອງສອງຄັ້ງ ແລະເພິ່ນຍັງພະຍາຍາມເຊື່ອງຄວາມບາບນັ້ນຈາກພຣະເຈົ້າ. ໃນເພງສັຣເສີນບົດ 51 ເພິ່ນໄດ້ຍອມສາລະພາບບາບທີ່**ຕໍ່ສູ້ພຣະເຈົ້າ.** ເພິ່ນບໍ່ໄດ້ຕັ້ງໃຈເຮັດຜິດບາບຕໍ່ສູ້ນາງບັດເຊບາ ອູຣີອາ, ອີລີອາມ ອາຫິໂຕແປວ ຫລືສະມາຊິກໃນຄອບຄົວຂອງຕົນເອງ. ແຕ່ຢ່າງໃດກໍຕາມຄວາມບາບອັນໃດກໍເປັນຄວາມບາບຕໍ່ສູ້ພຣະເຈົ້າ.

ຜູ້ກາດພຣະທັມນາທານໄດ້ປະກາດວ່າຄວາມຜິດບາບຂອງກະສັດດາວິດນັ້ນພຣະເຈົ້າໄດ້ຍົກໂທດໃຫ້ແລ້ວ. ກະສັດາວິດຈະບໍ່ຕາຍເໝືອນກົດບັນຍັດຂອງໂມເຊກ່າວໄວ້ (ລະບຽບພວກເລວີ 20:10; ພຣະບັນຍັດທີສອງ 22:22). ພຣະເຈົ້າໄດ້ອະພັຍໃຫ້ຖ້າດາວິດສາລະພາບຄວາມຜິດແລະຫັນໜ້າຫາພຣະເຈົ້າ, ສິ່ງນັ້ນກໍແມ່ນການກະທຳຂອງກະສັດດາວິດໃນເພງສັຣເສີນບົດ 51.

ພຣະເຈົ້າໄດ້ອະພັຍໃຫ້ແທ້ໃນເມື່ອເພິ່ນໄດ້ຫັນໄປຫາພຣະເຈົ້າ ແຕ່ເພິ່ນຕ້ອງຮັບເອົາຜົນທີ່ຕາມມາຂອງຄວາມບາບຢູ່. ດາບຂອງຄວາມວຸ້ນວາຍນັ້ນໄດ້ເກີດຂຶ້ນກັບຄອບຄົວຂອງເພິ່ນຄືພວກລູກທັງຫລາຍໄດ້ອິດສາຕໍ່ສູ້ຂ້າກັນແລະລູກຊາຍໃນທ້ອງຂອງນາງບັດຊີບາກໍຕາຍ. ເປັນເຣື່ອງທີ່ແປກປລາດ ເພາະດາວິດຍັງມີຊີວິດຢູ່ຕໍ່ໄປເຖິງແມ່ນມີຄວາມຜິດບາບດັ່ງກ່າວນັ້ນ. ເປັນຂອງທັມມະດາໃນໂລກທີ່ເຕັມເປັນດ້ວຍຄວາມບາບນີ້ ຄົນດີກໍໄດ້ຮັບໂທດທຸກທໍຣະມານເພາະການປະຕິບັດອັນໄຮ້ປໂຍດຂອງພວກເຮົາ.

ໃນການສາລະພາບຂອງກະສັດດາວິດເພິ່ນໄດ້ກ່າວວ່າພຣະເຈົ້າມີ**ພຣະຄຸນ**ອັນໃຫຍ່ຫລວງ ແລະມີຄວາມ**ຮັກໝັ້ນຄົງ**ຕໍ່ເພິ່ນ. ເຖິງແມ່ນດາວິດໄດ້ເຮັດແນວບໍ່ດີ ແຕ່ພຣະເຈົ້າໄດ້ກະທຳຕໍ່ເພິ່ນຕາມຄຳສັນຍາທີ່ກ່າວໄວ້. ດາວິດຍັງໄດ້ກ່າວເພີ່ມວ່າພຣະເຈົ້າມີຄວາມເມດຕາຢ່າງຫລວງຫລາຍພາຍມາກ. ເພິ່ນສະແດງໃຫ້ພວກເຮົາຮູ້ວ່າແຂນຂອງພຣະເຈົ້າອ້າໄວ້ສເມີທີ່ຈະຮັບເອົາຄົນຜິດບາບຜູ້ກັບໃຈໃໝ່.

ດາວິດໄດ້ທູນຂໍຕໍ່ພຣະເຈົ້າໃຫ້ຊຳຣະລ້າງຄວາມຜິດບາບໂດຍການຖວາຍຕົວ ເພິ່ນຕ້ອງການໃຫ້ພຣະເຈົ້າຊຳຣະເພິ່ນພົ້ນຈາກຄວາມບາບ. ໃນທຸກວັນນີ້ພວກເຮົາບໍ່ຕ້ອງເຮັດຕາມລະບຽບຂອງການນຖວາຍອີກແລ້ວ ເພາະພຣະເມສານ້ອຍຂອງພຣະເຈົ້າຄືອົງພຣະເຢຊູໄດ້ຖວາຍຕົນເອງເທິງໄມ້ກາງແຂນ ເພື່ອຊຳຣະຄວາມຜິດບາບຂອງມະນຸດຊາດແລ້ວ. ກະສັດດາວິດຮູ້ເຖິງລັກສະນະຂອງພຣະເຈົ້າຄື ພຣະອົງເປັນຄວາມຮັກ ແລະພຣະອົງໃຫ້ອະພັຍຕໍ່ຜູ້ສາລະພາບຄວາມບາບ..

ກະສັດດາວິດໄປບ່ອນໃດກໍຕາມ ເພິ່ນຮູ້ດີເຖິງຄວາມຜິດບາບຂອງຕົນເອງ. ເພິ່ນຍັງໄດ້ເຫັນຄວາມບາບນັ້ນຕິດຕາມໄປເຖິງລູກຫລານອີກ. ຄວາມຜິດບາບທີ່ເຄີຍທຳມານັ້ນໄດ້ຢູ່ຕໍ່ໜ້າເພິ່ນ ແຕ່ເພິ່ນຍອມຮັບເອົາຄວາມຜິດບາບນັ້ນຄົນດຽວໂດຍບໍ່ໄດ້ຖິ້ມໂທດຕໍ່ພຣະເຈົ້າ. ພຣະເຈົ້າເປັນອົງທີ່ບໍ່ມີຄວາມຜິດບາບໃດໆທັງສິ້ນ. ພຣະອົງຍອມອະພັຍໃຫ້ດາວິດ ພວກເຮົາກໍເຊັ່ນກັນຖ້າພວກເຮົາຍອມສາລະພາບຜິດບາບ ພຣະອົງກໍອະພັຍໃຫ້ພວກເຮົາ. ເຣື່ອງດັ່ງກ່າວນີ້ກໍມີຢູ່ໃນພຣະທັມຂ່າວປະເສີດ.

**ເປັນດ້ວຍເຫດໃດພວກເຮົາຈຶ່ງທຸກທໍຣະມານ?**

**ພວກເຮົາຮັບຄວາມທຸກທໍຣະມານກໍເພາະ...**

- ພວກເຮົາເຮັດຜິດບາບ.
- ພວກເຮົາໄດ້ຮັບຜົນຕອບແທນຍ້ອນຄວາມຜິດບາບຂອງຄົນອື່ນ.
- ພວກເຮົາຢູ່ໃນໂລກແຫ່ງຄວາມຜິດບາບ.

## ບົດຮຽນໃນຊີວິດ

ການທົດລອງໄດ້ເລີ້ມຈາກນ້ອຍແຕ່ໃນເມື່ອເຮົາເຫັນວ່າມັນເປັນການມ່ວນກໍກາຍເປັນບັນຫາໃຫຍ່. ຖ້າພວກເຮົາມີຊີວິດໂດຍອາສັຍແລະການນໍາພາຈາກພຣະເຈົ້າແລ້ວ ພວກເຮົາກໍເອົາຊັຍຊະນະຈາກການທົດລອງໄດ້. ຖ້າພວກເຮົາຍອມແພ້ຕໍ່ການທົດລອງ ກໍສະແດງວ່າພວກເຮົາປະຖິ້ມພຣະເຈົ້າ ແລະກໍຖືກທໍາລາຍດ້ວຍອໍານາດຂອງບາບ. ແນວໃດກໍດີ ພຣະເຈົ້າພ້ອມສເມີທີ່ຈະໃຫ້ອະພັຍຖ້າພວກເຮົາຍອມຜິດຕໍ່ພຣະອົງດ້ວຍການຖິ້ມໃຈເກົ່າແລະເອົາໃຈໃໝ່.

ພວກເຮົາສາມາດຮຽນນໍາຄວາມຜິດຂອງກະສັດດາວິດ ເພື່ອຊ່ວຍເຮົາເອົາຊະນະຕໍ່ການທົດລອງ ແລະເຮັດຜິດບາບ.

- ຄວາມບາບທຸກຊະນິດເລີ້ມຕົ້ນດ້ວຍການທົດລອງ ໃຫ້ພວກເຮົາເລືອກເອົາສາມຢ່າງ-ຄືບໍ່ເອົາຫົວຊາ, ຍອມຕໍ່ມັນ, ຫລືປະຕິເສດ.
- ການປົກບັງຄວາມຜິດບາບໄວ້ນັ້ນບໍ່ຊ່ອຍຫຍັງເຮົາໄດ້, ບໍ່ຊ້າກໍໄວ ພວກເຮົາຈໍາເປັນຕ້ອງໄດ້ປະເຊີນກັບມັນ.
- ພຣະເຈົ້າອະພັຍຄວາມຜິດບາບໄດ້ ແຕ່ພວກເຮົາຍັງຮັບຜົນທີ່ຕາມມາຈາກຄວາມບາບທີ່ເຄີຍເຮັດມາໃນທາງຮ່າງກາຍ.
- ຫລາຍໆເທື່ອພວກເຮົາໄດ້ລ່ວງລະເມີດຕໍ່ຄໍາເຕືອນໃນເມື່ອພວກເຮົາກາຍເປັນເຍື່ອຂອງການທົດລອງ.
- ການຍອມຕໍ່ການທົດລອງນັ້ນໄດ້ຮັບຜົນຮ້າຍຫລາຍປະການ-ໃນຕົວເຮົາ, ໃນຄົນອື່ນ, ທັງຜູ້ເປັນຄົນຖືກແລະຜູ້ເປັນຄົນຜິດ.

ໃນຕອນຕົ້ນຂອງບົດຮຽນນີ້ໄດ້ເວົ້າເຖິງສອງຄົນໄດ້ເຮັດຜິດບາບ ແຕ່ສອງຄົນນັ້ນໄດ້ຕັດສິນໃຈແກ້ບັນຫາແຕກຕ່າງກັນ. ທັງສອງຄົນນັ້ນໄດ້ເສັງຄໍາພະຍານອັນດີຕໍ່ຄົນອື່ນ ແລະເຮັດໃຫ້ພຣະເຈົ້າເສັງພຣະກຽດ. ແຕ່ເຫັນວ່າຄົນນຶ່ງໄດ້ຂ້າຕົນເອງຕາຍ ໂດຍບໍ່ໄດ້ແກ້ບັນຫາອັນໃດເລີຍ ແລະອີກຄົນນຶ່ງໄດ້ຍອມສາລະພາບຄວາມຜິດຕໍ່ອົງພຣະຜູ້ເປັນເຈົ້າແລະກໍຍອມຕໍ່ຄົນອື່ນຜູ້ຮັບຄວາມເຈັບປວດຍ້ອນການກະທໍາຂອງຕົນເອງ. ໃນຊີວິດສ່ວນຕົວຂອງທ່ານເດ່ ທ່ານເຄີຍມີບັນຫາສ່ວນຕົວບໍ່ທີ່ທ່ານບໍ່ໄດ້ສາລະພາບຕໍ່ອົງພຣະຜູ້ເປັນເຈົ້າເທື່ອ? ຈົ່ງຍອມໃຫ້ບົດຮຽນນີ້ສອນທ່ານ ແລະກາຍຄົນຜູ້ໄດ້ຮັບການໃຫ້ອະພັຍຈາກອົງພຣະຜູ້ເປັນເຈົ້າ. ຍອມໃຫ້ຜູ້ປະກາດພຣະທັມນາທານເວົ້າກັບທ່ານເໝືອນກັບເວົ້າກັບກະສັດດາວິດເທີ້ນ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.